# ການປ່ຽນແປງອັດຕາ, QIP ແລະ ການປັບປຸງບັນຊີຜູ້ໃຫ້ບໍລິການ

3 ກັນຍາ 2024

**ໝາຍເຫດສຳຄັນສຳລັບບຸກຄົນ ແລະ ຄອບຄົວ:** DDS ກຳລັງສົ່ງອີເມວສະບັບນີ້ເພື່ອແຈ້ງຊຸມຊົນຂອງພວກເຮົາໃຫ້ຮູ້ກ່ຽວກັບຄວາມຄືບໜ້າຂອງການປ່ຽນແປງອັດຕາ, ແຜນງານສົ່ງຈູງໃຈເພື່ອຄຸນນະພາບ ແລະ ບັນຊີຜູ້ໃຫ້ບໍລິການ. ກະລຸນາສອບຖາມຜູ້ໃຫ້ບໍລິການຂອງທ່ານວ່າເຂົາເຈົ້າມີຊື່ເຂົ້າຮ່ວມໃນບັນຊີຜູ້ໃຫ້ບໍລິການບໍ່. ໃຫ້ເອົາອີເມວສະບັບນີ້ໃຫ້ເຂົາເຈົ້າເບິ່ງ ຖ້າເຂົາເຈົ້າບໍ່ຮູ້ກ່ຽວກັບມັນ. ຖ້າທ່ານຕ້ອງການສືບຕໍ່ຮັບຂໍ້ມູນຫຼ້າສຸດທຸກສອງອາທິດກ່ຽວກັບສິ່ງນີ້, ກະລຸນາ**ລົງທະບຽນຢູ່ທີ່ລິ້ງນີ້.**

ສະບາຍດີຕອນທ່ຽງ,
ອີເມວປະຈຳສອງອາທິດສະບັບນີ້ມີຂໍ້ມູນ ແລະ ຄວາມຄືບໜ້າຫຼ້າສຸດກ່ຽວກັບການພັດທະນາເພື່ອການປ່ຽນແປງອັດຕາ, ແຜນງານສົ່ງຈູງໃຈເພື່ອຄຸນນະພາບ (Quality Incentive Program, QIP) ແລະ ບັນຊີຜູ້ໃຫ້ບໍລິການ. ຂໍຂອບໃຈສູນປະຈຳພາກພື້ນ ແລະ ພະນັກງານຜູ້ໃຫ້ບໍລິການທັງໝົດສຳລັບການຮ່ວມມືໃນການພັກດັນຄວາມພະຍາຍາມເຫຼົ່ານີ້. ພາກ**ສິ່ງທີ່ຕ້ອງຮູ້**ຢູ່ລຸ່ມນີ້ຈະມີຂໍ້ມູນຫຼ້າສຸດ ແລະ ຂັ້ນຕອນຕໍ່ໄປ. ນອກຈາກນັ້ນແມ່ນຍັງມີພາກປະຫວັດທີ່ມີຊື່ວ່າ **ການປ່ຽນແປງອັດຕາແມ່ນຫຍັງ?** ຢູ່ຕອນທ້າຍເພື່ອໃຫ້ບໍລິບົດ ແລະ ຂໍ້ມູນເພີ່ມເຕີມ.

## ສິ່ງທີ່ຕ້ອງຮູ້

<u>ຂໍ້ມູນຫຼ້າສຸດກ່ຽວກັບການປ່ຽນແປງອັດຕາ:</u>
ນັບແຕ່ນີ້ເປັນຕົ້ນໄປ ແລະ ຕະຫຼອດເດືອນກັນຍາ, DDS ຈະເຜີຍແຜ່ຊຸດທິດຊີ້ນຳໃຫ້ແກ່ສູນປະຈຳພາກພື້ນໃນການຈັດຕັ້ງປະຕິບັດຮູບແບບອັດຕາໃໝ່ຢ່າງຄົບຖ້ວນໂດຍຈະມີຜົນສັກສິດໃນວັນທີ **1 ມັງກອນ1 2025**. ທິດຊີ້ນຳເຫຼົ່ານີ້ ທີ່ຕາມດ້ວຍການຝຶກອົບຮົມ ຈະປະກອບມີ:

- ພາບລວມກ່ຽວກັບການປ່ຽນແປງອັດຕາ,
- ການໃຫ້ຂໍ້ມູນຫຼ້າສຸດກ່ຽວກັບພາກສ່ວນຮູບແບບອັດຕາໃໝ່ຂອງແຜນງານສົ່ງຈູງໃຈເພື່ອຄຸນນະພາບ,
- ລາຍລະອຽດກ່ຽວກັບບົດບາດ ແລະ ຄວາມຮັບຜິດຊອບສຳລັບການປ່ຽນແປງ,
- ຄຳແນະນຳກ່ຽວກັບສະຖານະການພິເສດ ແລະ ຂໍ້ຍົກເວັ້ນ,
- ທິດຊີ້ນຳລະອຽດກ່ຽວກັບປະເພດການບໍລິການສ່ວນບຸກຄົນ.

<u>ຂໍ້ມູນຫຼ້າສຸດກ່ຽວກັບແຜນງານສົ່ງຈູງໃຈເພື່ອຄຸນນະພາບ (Quality Incentive Program, QIP):</u>
ໂອກາດຈູງໃຈແມ່ນມີຫຼາກຫຼາຍການໃນລະຫວ່າງສົກປີການເງິນ 2024/25 ສຳລັບຜູ້ໃຫ້ບໍລິການເພື່ອຮັບເງິນສົດຈູງໃຈໜຶ່ງຄັ້ງ:

- ບັນຊີຜູ້ໃຫ້ບໍລິການ:  *ການເຂົ້າຮ່ວມໃນບັນຊີຜູ້ໃຫ້ບໍລິການກ່ອນວັນທີ 31 ຕຸລາ 2024 ແມ່ນມາດຕະການດຽວເທົ່ານັ້ນສຳລັບພາກສ່ວນສິ່ງຈູງໃຈເພື່ອຄຸນນະພາບຈາກອັດຕາເຕັມໃນຮູບແບບອັດຕາ ສຳລັບໄລຍະເວລາແຕ່ວັນທີ 1 ມັງກອນ 2025 ຫາ 30 ມິຖຸນາ 2026.* ເບິ່ງລາຍລະອຽດໃນພາກສ່ວນບັນຊີຜູ້ໃຫ້ບໍລິການລຸ່ມນີ້.
- ການສຳຫຼວດແຮງງານ DSP: ໃຫ້ $8,000 ຕໍ່ອົງການຈັດຕັ້ງທີ່ໃຫ້ບໍລິການທີ່ມີສິດທີ່ເຂົ້າຮ່ວມໃນການເກັບກຳຂໍ້ມູນນີ້. ການສຳຫຼວດແມ່ນເປີດແຕ່ເດືອນເມສາຫາມິຖຸນາໃນແຕ່ລະປີ.
- ການປ້ອງກັນ ແລະ ການມີສຸຂະພາບທີ່ດີ:  ໃຫ້ $1,000 ແກ່ອົງການຈັດຕັ້ງທີ່ໃຫ້ບໍລິການຕໍ່ໜຶ່ງຄົນທີ່ໄດ້ຮັບການບໍລິການໃນເຮືອນສາມປະເພດທີ່ມີສິດ ແລະ ສູງເຖິງ $1,600 ຕໍ່ບຸກຄົນໃນເຮືອນໜຶ່ງປະເພດ. ການເກັບກຳຂໍ້ມູນແມ່ນຈະມີຂຶ້ນໃນເດືອນມັງກອນ ແລະ ກຸມພາໃນແຕ່ລະປີ, ເຊິ່ງກວມເອົາປີປະຕິທິນກ່ອນໜ້ານັ້ນ.
- ການເຂົ້າເຖິງການວ່າຈ້າງງານ:  ໃຫ້ $1,500 ແກ່ອົງການຈັດຕັ້ງທີ່ໃຫ້ບໍລິການຕໍ່ໜຶ່ງຄົນທີ່ໄດ້ຮັບການບໍລິການ, ພ້ອມກັບມີສິ່ງຈູງໃຈເພີ່ມເຕີມສຳລັບບຸກຄົນທີ່ອອກຈາກໂຄງການຝຶກງານແບບເສຍເງິນ (Paid Internship Program, PIP) ແລະ ການວ່າຈ້າງທີ່ໄດ້ຄ່າຈ້າງຂັ້ນຕ່ຳແບບຍ່ອຍ (14c). ສິ່ງຈູງໃຈສຳລັບບຸກຄົນທີ່ຮັກສາການວ່າຈ້າງງານແບບປະສົມປະສານເປັນເວລາ 30 ມື້ ແລະ ຫົກເດືອນຫຼັງຈາກອອກການວ່າຈ້າງທີ່ໄດ້ຄ່າຈ້າງຂັ້ນຕ່ຳແບບຍ່ອຍ ເຊິ່ງໄດ້ເພີ່ມຂຶ້ນສຳລັບສົກປີການເງິນ 2024-25. ສາມາດປະກອບເອກະສານຂໍຮັບເງິນຈູງໃຈຕາມກະແສການຈ່າຍ ແລະ ການຈ່າຍຕາມໄຕມາດ.
- ຂີດຄວາມສາມາດຂອງການວ່າຈ້າງງານ: ໃຫ້ $3,000 ຕໍ່ພະນັກງານຂອງຜູ້ໃຫ້ບໍລິການທີ່ເຮັດການຝຶກອົບຮົມຜູ້ຊ່ຽວຊານ ACRE ຫຼື CESP ສຳເລັດ. ສາມາດປະກອບເອກະສານຂໍຮັບເງິນຈູງໃຈຕາມກະແສການຈ່າຍ ແລະ ການຈ່າຍຕາມໄຕມາດ.
- ການແຊກແຊງເບື້ອງຕົ້ນ: ໃຫ້ $300 ແກ່ອົງການຈັດຕັ້ງທີ່ໃຫ້ບໍລິການຕໍ່ກໍລະນີທຳອິດຂອງການບໍລິການປິ່ນປົວຄອບຄົວ ຫຼື ເດັກນ້ອຍພາຍໃນ 20 ມື້ຫຼັງການອະນຸຍາດການຊື້ການບໍລິການ (Purchase of Service, POS) ສຳລັບການບໍລິການນັ້ນ. ສິ່ງຈູງໃຈນີ້ແມ່ນມີໃຫ້ໃນຊ່ວງປີປະຕິທິນ 2024 ແລະ ຄິດໄລ່ໂດຍນຳໃຊ້ ຂໍ້ມູນທາງບໍລິຫານ. ເງິນຈູງໃຈແມ່ນຈ່າຍຕາມໄຕມາດ.

ສຳລັບຂໍ້ມູນເພີ່ມເຕີມກ່ຽວກັບ QIP ແລະ ໂອກາດຈູງໃຈຂອງໂຄງການ, ກະລຸນາເຂົ້າເບິ່ງເວັບໄຊ QIP.

**ບັນຊີຜູ້ໃຫ້ບໍລິການ:**

ຂັ້ນຕອນທີ 1 ສຳລັບບັນຊີແມ່ນການເກັບກຳຂໍ້ມູນ (ຕົວຢ່າງ: ເລກປະຈຳຕົວຜູ້ເສຍອາກອນ ແລະ ຜູ້ໃຫ້ບໍລິການ). ວຽກງານດັ່ງກ່າວນີ້ແມ່ນພວມດຳເນີນຢູ່ໂດຍມີການຊ່ວຍເຫຼືອຈາກຜູ້ຮັບເໝົາຂອງພະແນກ ກໍຄື Protiviti. ຄວາມພະຍາຍາມເຫຼົ່ານີ້ໄດ້ສິ້ນສຸດໃນວັນທີ 30 ສິງຫາ.

- ເວລາຍັງມີເຫຼືອຢູ່ ຖ້າທ່ານແມ່ນຜູ້ໃຫ້ບໍລິການ ແລະ ຍັງບໍ່ໄດ້ສົ່ງຂໍ້ມູນເທື່ອ. ກະລຸນາເບິ່ງລົ້ງການສໍາຫຼວດ ແລະ ຂໍ້ມູນໂດຍການໂທຫາ ຢູ່ທີ່ເວັບໄຊບັນຊີຜູ້ໃຫ້ບໍລິການ.
- ອົງການຈັດຕັ້ງທີ່ໃຫ້ບໍລິການ**ຕ້ອງ**ປັບປຸງຂໍ້ມູນຂອງເຂົາເຈົ້າໃຫ້ໃໝ່ຫຼ້າສຸດ ເຊິ່ງເປັນສ່ວນສໍາຄັນໃນການລຶບລ້າງຂໍ້ມູນ ແລະ ການຫັນປ່ຽນໄປໃຊ້ບັນຊີຜູ້ໃຫ້ບໍລິການທົ່ວລັດແບບໃໝ່.

ຂັ້ນຕອນທີ 2 ສໍາລັບບັນຊີແມ່ນການລົງທະບຽນໂດຍຜູ້ໃຫ້ບໍລິການສໍາລັບເວັບໄຊອອນລາຍ ແລະ ການຢັ້ງຢືນຂໍ້ມູນພາຍໃນໝາຍເລກຜູ້ໃຫ້ບໍລິການຂອງແຕ່ລະພາກສ່ວນ, ລວມທັງຂໍ້ມູນການຕິດຕໍ່, ທີ່ຢູ່ ແລະ ຈຸດຕິດຕໍ່ໃນທ້ອງຖິ່ນ.

ເງິນຈູງໃຈສໍາລັບບັນຊີຜູ້ໃຫ້ບໍລິການ:
ສໍາລັບວັນທີ 1 ມັງກອນ 2025 ຫາ 30 ມິຖຸນາ 2026 ແມ່ນມີເງິນຈູງໃຈໃຫ້ຜູ້ໃຫ້ບໍລິການ, ໂດຍຂຶ້ນກັບວ່າອັດຕາການເບີກເງິນຄືນໃນປັດຈຸບັນຂອງເຂົາເຈົ້າກ່ຽວຂ້ອງກັບອັດຕາການເບີກເງິນຄືນໃນການປ່ຽນແປງອັດຕາແນວໃດ.

ເງິນຈູງໃຈໜຶ່ງຄັ້ງ
ຜູ້ໃຫ້ບໍລິການທັງໝົດສາມາດຮັບເງິນຈູງໃຈໜຶ່ງຄັ້ງອາດ ຖ້າຫາກເຮັດຂັ້ນຕອນທີ 1 ແລະ 2 ສໍາເລັດພາຍໃນວັນທີ 31 ຕຸລາ 2024.

ການຈ່າຍເງິນຈູງໃຈເພື່ອຄຸນນະພາບໃນການເປັນສ່ວນໜຶ່ງຂອງອັດຕາການເບີກເງິນຄືນ
ສໍາລັບຜູ້ໃຫ້ບໍລິການທີ່ມີຢູ່ໃນການປ່ຽນແປງອັດຕາ, ອັດຕາການເບີກເງິນຄືນແມ່ນກໍານົດໂດຍສອງອົງປະກອບສໍາລັບການຈ່າຍເງິນ ກໍຄື *ອັດຕາພື້ນຖານ* ທີ່ເທົ່າກັບ 90 ເປີເຊັນຂອງຮູບແບບອັດຕາ ແລະ *ອົງປະກອບຈູງໃຈເພື່ອຄຸນນະພາບ* ທີ່ເທົ່າກັບ 10 ເປີເຊັນຂອງຮູບແບບອັດຕາ. ຜູ້ໃຫ້ບໍລິການທີ່ມີຢູ່ໃນການປ່ຽນແປງອັດຕາ ທີ່ມີອັດຕາປັດຈຸບັນທີ່ໜ້ອຍກວ່າ 100 ເປີເຊັນຂອງຮູບແບບອັດຕາເຕັມ ແມ່ນມີສິດຮັບອົງປະກອບຈູງໃຈເພື່ອຄຸນນະພາບ ຖ້າເຂົາເຈົ້າເຮັດທັງຂັ້ນຕອນທີ 1 ແລະ 2 ສໍາເລັດ. ສິ່ງດັ່ງກ່າວນີ້ແມ່ນມີໃຫ້ເພີ່ມເຕີມກັບເງິນຈູງໃຈໜຶ່ງຄັ້ງທີ່ໄດ້ກ່າວໄວ້ຂ້າງເທິງ.

## ຂັ້ນຕອນຕໍ່ໄປ (ສິ່ງທີ່ໄດ້ຮັບທີ່ສໍາຄັນ, ລາຍການດໍາເນີນການ ຫຼື ວັນທີທີ່ສໍາຄັນ):

**ການປ່ຽນແປງອັດຕາ:**
- ເມື່ອມີການເຜີຍແຜ່ທິດຊີ້ນໍາກ່ຽວກັບການປ່ຽນແປງອັດຕາ, ພະແນກຈະຈັດຝຶກອົບຮົມ ແລະ ການຂະຫຍາຍເຖິງສູນປະຈໍາພາກພື້ນ ແລະ ຜູ້ໃຫ້ບໍລິການ. ການຝຶກອົບຮົມຈະໃຫ້ຄໍາແນະນໍາດ້ານເຕັກນິກກ່ຽວກັບການຈັດຮູບແບບອັດຕາໃຫ້ແທດເໝາະ, ປື້ມຜືອຫັດກ່ຽວກັບອັດຕາ ແລະ ຫົວຂໍ້ອື່ນໆກ່ຽວກັບການປ່ຽນແປງອັດຕາທົ່ວໄປ. ຜູ້ຮັບເໝົາ, ຜູ້ຮ່ວມງານຈັດການດ້ານສຸຂະພາບ (Health Management Associates) (ຊື່ເກົ່າແມ່ນ Burns and Associates) ຈະຊ່ວຍກັບການຝຶກອົບຮົມນີ້.

QIP:

- ກອງປະຊຸມກຸ່ມເຮັດວຽກ QIP ຈະຖືກຈັດຂຶ້ນໃນວັນທີ 26 ກັນຍາ. ກອງປະຊຸມຈະມີຂໍ້ມູນຫຼ້າສຸດກ່ຽວກັບມາດຕະການ QIP ຕ່າງໆ ແບະ ບັນຊີຜູ້ໃຫ້ບໍລິການ ລວມທັງຫົວຂໍ້ອື່ນໆ.
- ໃນລະດູໃບໄມ້ລົ່ນປີ 2024, ການສ້າງ ແລະ ການທົດສອບມາດຕະການຄວາມພໍໃຈກັບການວ່າຈ້າງງານຈະເລີ່ມຂຶ້ນ. ມາດຕະການນີ້ຈະປະເມີນຄວາມພໍໃຈຂອງບຸກຄົນພ້ອມກັບການຊ່ວຍເຫຼືອທີ່ເຂົາເຈົ້າໄດ້ຮັບກ່ອນ ແລະ ໃນຂະນະເຮັດວຽກໃນວຽກງານແບບປະສົມປະສານ.

ບັນຊີຜູ້ໃຫ້ບໍລິການ:

- ຕາມທີ່ໃຫ້ລາຍລະອຽດຢູ່ຂ້າງເທິງ, ຂັ້ນຕອນທີ 1 ແລະ 2 ຈະດຳເນີນຈົນຮອດທ້າຍເດືອນຕຸລາ 2024.

---

# ການປ່ຽນແປງອັດຕາແມ່ນຫຍັງ?

ການປ່ຽນແປງອັດຕາ
ໃນລະບົບການບໍລິການດ້ານພັດທະນາການຂອງລັດແຄລິຟໍເນຍໝາຍເຖິງການປ່ຽນແປງວິທີທາງທີ່ລັດຈ່າຍເງິນໃຫ້ການບໍລິການຕ່າງໆ. ເປົ້າໝາຍແມ່ນເພື່ອໃຫ້ແນ່ໃຈວ່າລະບົບຈ່າຍເງິນຍ່າງຍຸຕິທຳ, ຮອງຮັບການເບິ່ງແຍງທີ່ມີຄຸນນະພາບສູງ ແລະ ຊ່ວຍຜູ້ຄົນຮັບການບໍລິການທີ່ເຂົາເຈົ້າຕ້ອງການ. ເງິນແມ່ນຈ່າຍໃຫ້ຜູ້ໃຫ້ບໍລິການທັງໝົດໂດຍພະແນກບໍລິການດ້ານພັດທະນາການ (Department of Developmental Services, DDS) ໂດຍຜ່ານສູນປະຈຳພາກພື້ນ. ເງິນແມ່ນສາມາດເບີກຄືນໄດ້ສຳລັບການບໍລິການທີ່ສະໜອງໃຫ້ແກ່ບຸກຄົນທີ່ມີຄວາມພິການດ້ານສະຕິປັນຍາ ແລະ ພັດທະນາການ (intellectual and developmental disabilities, I/DD) ແລະ ຄອບຄົວ.

ວຽກງານປ່ຽນແປງອັດຕາໄດ້ເລີ່ມຂຶ້ນໃນປີ 2019 ພາຍຫຼັງນິຕິກຳໄດ້ກຳນົດໃຫ້ມີການສຶກສາອັດຕາກ່ຽວກັບວິທີການໃຫ້ບໍລິການ ແລະ ການຈ່າຍເງິນທົ່ວລັດ. ການປັບປ່ຽນອັດຕາໄດ້ເລີ່ມຂຶ້ນໃນປີ 2021-22 ແລະ ກົດໝາຍວ່າດ້ວຍງົບປະມານ 2024-25 ໄດ້ກຳນົດວັນທີຈັດຕັ້ງປະຕິບັດການປ່ຽນແປງອັດຕາເປັນວັນທີ 1 ມັງກອນ 2025.

ມີຫຼາຍແຜນງານ ແລະ ໂຄງການທີ່ກຳລັງເກີດຂຶ້ນທີ່ DDS ທີ່ເປັນສ່ວນໜຶ່ງຂອງຂັ້ນຕອນການປ່ຽນແປງອັດຕາ, ລວມທັງ ແຜນງານສົ່ງຈູງໃຈເພື່ອຄຸນນະພາບ (Quality Incentive Program, QIP). ໂດຍຜ່ານ QIP, ຜູ້ໃຫ້ບໍລິການສາມາດຮັບເງິນສູງເຖິງ 10 ເປີເຊັນຂອງອັດຕາຂອງເຂົາເຈົ້າໂດຍອີງໃສ່ຄຸນນະພາບຂອງການບໍລິການທີ່ເຂົາເຈົ້າສະໜອງໃຫ້. QIP ມີຫຼາຍມາດຕະການທີ່ແຕກຕ່າງກັນ, ເຊິ່ງແຕ່ລະອັນແມ່ນກ່ຽວຂ້ອງກັບປະເພດຕ່າງໆຂອງການບໍລິການ.

ມາດຕະການແມ່ນວິທີການໃນການປະເມີນຄຸນນະພາບຂອງການບໍລິການທີ່ດຳເນີນໂດຍຜູ້ໃຫ້ບໍລິການ. ໄດ້ມີການກຳນົດຂົງເຂດຕໍ່ໄປນີ້ສຳລັບມາດຕະການ QIP
ໂດຍຜ່ານຂະບວນການກຸ່ມເຮັດວຽກສາທາລະນະຂອງ QIP: ການປ້ອງກັນ ແລະ
ການມີສຸຂະພາບທີ່ດີ; ການວ່າຈ້າງງານ; ທາງເລືອກຕາມການຮັບແຈ້ງ ແລະ ຄວາມພໍໃຈ;
ຂີດຄວາມສາມາດຂອງແຮງງານ; ການແຊກແຊງເບື້ອງຕົ້ນ; ແລະ ການເຂົ້າເຖິງການບໍລິການ.

ມາດຕະການພື້ນຖານ ເຊິ່ງເອີ້ນວ່າ ບັນຊີຜູ້ໃຫ້ບໍລິການ ແມ່ນຖືກເພີ່ມໃສ່
QIP.  ບັນຊີຜູ້ໃຫ້ບໍລິການຈະລວບລວມ ແລະ
ໃຫ້ຂໍ້ມູນທົ່ວລັດກ່ຽວກັບຜູ້ໃຫ້ບໍລິການທີ່ຖືກຕ້ອງເປັນເທື່ອທຳອິດ.
ຜູ້ເຂົ້າຮ່ວມໃນບັນຊີຜູ້ໃຫ້ບໍລິການແມ່ນມາດຕະການ QIP ດຽວທີ່ຈະຖືກໃຊ້ໃນ 2024-25 ແລະ
2025-26
ເພື່ອກຳນົດວ່າຜູ້ໃຫ້ບໍລິການຈະໄດ້ຮັບເງິນຈູງໃຈຄຸນນະພາບຈາກຮູບແບບອັດຕາສຳລັບການບໍລິການຂອງເຂົາເຈົ້າ ຫຼື ບໍ່.

## ຄຳຖາມ:

ອີເມວສຳລັບການປ່ຽນແປງອັດຕາ: ratesquestions@dds.ca.gov
ອີເມວ QIP: QIPquestions@dds.ca.gov
ອີເມວສຳລັບບັນຊີຜູ້ໃຫ້ບໍລິການ: providerdirectory@dds.ca.gov.

DDS Department of Developmental Services